**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງຊຽງຂວາງ

ເລກທີ 246/ຈຂ

ຊຽງຂວາງ, ລົງວັນທີ 25 ຕຸລາ 2017

# ຂໍ້ຕົກລົງ

## ວ່າດ້ວຍ

## ນະໂຍບາຍ ແລະ ລາຄາຫົວໜ່ວຍການທົດແທນຄ່າເສຍຫາຍໃຫ້ແກ່ປະຊາຊົນທີ່ໄດ້ຮັບ ຜົນກະທົບຈາກໂຄງການກໍ່ສ້າງແລວສາຍສົ່ງໄຟຟ້າແຮງສູງ 500 ກວ ຊຽງຂວາງ-ນາຊາຍທອງ, ເມືອງພາໄຊ, ແຂວງຊຽງຂວາງ.

- ອີງຕາມ ສິດ ແລະ ໜ້າທີ່ຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ທີ່ລະບຸໄວ້ພາກທີ III, ໝວດທີ IV, ມາດຕາ 20 ຂອງກົດໝາຍ ວ່າດ້ວຍ ການປົກຄອງທ້ອງຖິ່ນແຫ່ງ ສປປ ລາວ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015;
- ອີງຕາມ ດຳລັດ ວ່າດ້ວຍ ການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນຈາກໂຄງການພັດທະນາ, ສະບັບ ເລກທີ 84/ລບ, ລົງວັນທີ 05 ເມສາ 2016;
- ອີງຕາມ ບົດບັນທຶກກອງປະຊຸມປຶກສາຫາລື, ຄົ້ນຄ້ວາ ກ່ຽວກັບ ( ຮ່າງ ) ຂໍ້ຕົກລົງ ວ່າດ້ວຍການກຳນົດນະໂຍບາຍ ແລະ ລາຄາຫົວໜ່ວຍການທົດແທນຄ່າເສຍຫາຍ ໃຫ້ແກ່ປະຊາຊົນທີ່ໄດ້ຮັບຜົນກະທົບຈາກໂຄງການກໍ່ສ້າງແລວສາຍສົ່ງໄຟຟ້າແຮງສູງ 500 ກວ ຊຽງຂວາງ-ນາຊາຍທອງ ໃນຄັ້ງວັນທີ 04 ພຶດສະພາ 2017;
- ອີງຕາມ ໜັງສືສະເໜີ ຂອງທ່ານຮອງເຈົ້າແຂວງຊຽງຂວາງ ຜູ້ຊີ້ນຳວຽກງານງານເສດຖະກິດ, ສະບັບເລກທີ 23/ຈຂ, ລົງວັນທີ 13 ຕຸລາ 2017;
- ອີງຕາມ ມະຕິຂອງຄະນະປະຈຳສະພາປະຊາຊົນແຂວງ ສະບັບເລກທີ 81/ຄປຈ.ຊຂ, ລົງວັນທີ 24 ຕຸລາ 2017.

## ເຈົ້າແຂວງ ແຂວງຊຽງຂວາງ ຕົກລົງ:

**ມາດຕາ 1 : ເງື່ອນໄຂ ແລະ ສິດຂອງຄອບຄົວທີ່ຈະໄດ້ຮັບການທົດແທນຊັບສິນຈາກໂຄງການ.**

1. ທຸກຄອບຄົວທີ່ຖືກຜົນກະທົບຢູ່ບໍລິເວນເຂດກໍ່ສ້າງໂຄງການແລວສາຍສົ່ງໄຟຟ້າແຮງສູງ 500 ກວ, ຊຽງຂວາງ ຫາ ນາຊາຍທອງ ລ້ວນແຕ່ມີສິດໄດ້ຮັບນະໂຍບາຍການທົດແທນຈາກໂຄງການ, ສ່ວນປະຊາຊົນທີ່ຖືກຜົນກະທົບໃນບໍລິເວນແລວສາຍສົ່ງຜ່ານ ຈະໄດ້ຮັບນະໂຍບາຍການທົດແທນຄ່າເສຍຫາຍຕາມຫຼັກການ, ຈຳນວນຄອບຄົວທີ່ຈະໄດ້ຮັບນະໂຍບາຍແມ່ນຖືເອົາຕາມຈຳນວນຄອບຄົວທີ່ໄດ້ຂຶ້ນທະບຽນການສຳຫຼວດຕົວຈິງ.
2. ຊັບສິນທຸກຢ່າງທີ່ເສຍຫາຍຍ້ອນການພັດທະນາໂຄງການກໍ່ສ້າງແລວສາຍສົ່ງ 500 ກວ ຊຽງຂວາງ ຫາ ນາຊາຍທອງ ລ້ວນແຕ່ຈະໄດ້ຮັບການທົດແທນຢ່າງໜ້ອຍເທົ່າເດີມ ຫຼື ດີກ່ວາເດີມ, ການທົດແທນຄ່າເສຍຫາຍນັ້ນຕ້ອງພະຍາຍາມທົດແທນເປັນເງິນສົດ ຫຼື ທົດແທນເປັນວັດຖຸທີ່ມີຄຸນນະພາບບໍ່ຫຼຸດເດີມ, ລາຄາທົດແທນຄ່າເສຍຫາຍແມ່ນອີງໃສ່ລາຄາຫົວໜ່ວຍ ທີ່ຖືກຮັບຮອງຈາກປະທານຄະນະກຳມະການສິ່ງແວດລ້ອມ, ຊົດເຊີຍ ແລະ ຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນທີ່ໄດ້ຮັບຜົນກະທົບຈາກໂຄງການເຂື່ອນໄຟຟ້ານ້ຳຕົກຂັ້ນແຂວງ.

**ມາດຕາ 2 : ວ່າດ້ວຍການທົດແທນທີ່ດິນທີ່ສູນເສຍຢ່າງຖາວອນ.**

1. **ດິນກະສິກຳ:** ໝາຍເຖິງທີ່ດິນຖືກນຳໃຊ້ຜະລິດກະສິກຳແບບຖາວອນ ເຊັ່ນ: ດິນນາ, ດິນໄຮ່, ດິນສວນ, ໜອງປາ ແລະ ດິນປະເພດອື່ນໆ ທີ່ມີໃບຕາດິນ, ໃບແຈ້ງການຄອບຄອງທີ່ດິນ, ໃບແຜ່ນທີ່ດິນ, ໃບເສຍພາສີ ຫຼື ໃບຢັ້ງຢືນຈາກອຳນາດການປົກຄອງຂັ້ນບ້ານ ແລະ ຂັ້ນອື່ນໆ ເພື່ອເປັນເອກະສານຢັ້ງຢືນໃຊ້ເປັນຫຼັກຖານ.

- ການທົດແທນທີ່ດິນສາມາດປ່ຽນແທນດ້ວຍດິນ ຫຼື ເປັນເງິນສົດ, ການຈ່າຍຄ່າທົດແທນຈະສາມາດຈັດຕັ້ງປະຕິບັດພາຍຫຼັງຈາກການຕີລາຄາຂອງຄະນະກຳມະການ, ໂຄງການລວມທັງເຈົ້າຂອງຊັບສິນ ແລະ ຮັບຮອງໂດຍຄະນະກຳມະການສິ່ງແວດລ້ອມ, ຊົດເຊີຍ ແລະ ຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນທີ່ໄດ້ຮັບຜົນກະທົບຈາກໂຄງການເຂື່ອນໄຟຟ້ານ້ຳຕົກຂັ້ນແຂວງ ບົນພື້ນຖານ ລະບຽບກົດໝາຍວ່າ ດ້ວຍທີ່ດິນ.
- ກໍລະນີດິນບໍ່ໄດ້ຖືກຜົນກະທົບ ເຈົ້າຂອງທີ່ດິນຈະບໍ່ໄດ້ຮັບການທົດແທນຈາກໂຄງການ ແລະ ສາມາດກັບໄປນຳໃຊ້ໄດ້ຕາມປົກກະຕິ.
- ສຳລັບປະຊາຊົນທີ່ສູນເສຍໜອງປາຈາກການກໍ່ສ້າງໂຄງການ ແມ່ນຈະໄດ້ຮັບການທົດແທນເປັນເງິນສົດຕາມລາຄາຫົວໜ່ວຍທີ່ແຂວງຮັບຮອງ.

**I. ການທົດແທນປະເພດດິນນາ,ດິນສວນ ແລະ ອື່ນໆ.**

- ລາຄາຫົວໜ່ວຍທົດແທນທີ່ດິນທີ່ຖືກຜົນກະທົບຈາກດິນເສົາ
  ການຄິດໄລ່ແມ່ນໄດ້ຖືເອົາສະມັດຕະພາບ ແລະ ລາຄາເຂົ້າໃນທ້ອງຕະຫຼາດໃນປັດຈຸບັນເປັນຫຼັກ.
- ມາດຕະຖານ ແລະ ລາຄາທີ່ເປັນພື້ນຖານໃນການຄິດໄລ່ມູນຄ່າທົດແທນຂອງດິນ
  - ສະມັດຕະພາບເຂົ້ານາຂອງປະຊາຊົນທີ່ໄດ້ຮັບຜົນກະທົບ ສະເລ່ຍແມ່ນ 4 ໂຕນ/ເຮັກຕາ.
  - ລາຄາເຂົ້າເປືອກ 3,000 ກີບ/ກລ.
  - ລວງເລິກຂອງໜອງປາສະເລ່ຍ 1 ແມັດ.

**1. ນິຍາມ:**

- ທີ່ດິນ ຫຼື ຊັບສິນໄດ້ຮັບຜົນກະທົບຖາວອນຈາກການກໍ່ສ້າງໂຄງການແລວສາຍສົ່ງໄຟຟ້າແຮງສູງ 500 ກວ ແຂວງຊຽງຂວາງ ຫາ ສະຖານີນາຊາຍທອງ, ນະຄອນຫຼວງວຽງຈັນ ເຊິ່ງກວມເອົາຜົນກະທົບທີ່ເກີດຈາກໂຄງການຂອງແຕ່ລະບ້ານ ແລະ ສະຖານທີ່ບ່ອນອື່ນໆ ທີ່ຈຳເປັນຕ້ອງໄດ້ນຳໃຊ້ເຂົ້າໃນການກໍ່ສ້າງໂຄງການຢ່າງຖາວອນ, ໂຄງການຈະທົດແທນຄ່າເສຍຫາຍຕາມຫົວໜ່ວຍລາຄາທີ່ກຳນົດໄວ້ໃນຂໍ້ຕົກລົງ ສະບັບນີ້.
- ທີ່ດິນ ຫຼື ຊັບສິນຖືກໂຄງການນຳໃຊ້ຊົ່ວຄາວໃນໄລຍະກໍ່ສ້າງໂຄງການ ເຊັ່ນ: ເສັ້ນທາງຊົ່ວຄາວ, ບໍ່ດິນ, ຈຸດຕັ້ງເຮືອນພັກຊົ່ວຄາວ ແລະ ບ່ອນອື່ນໆ ໂຄງການຈະທົດແທນຄ່າເສຍຫາຍແບບເຕັມສ່ວນຕໍ່ການສູນເສຍລາຍຮັບ, ການສູນເສຍຊັບສິນ, ພືດ ແລະ ຕົ້ນໄມ້ຕາມແຕ່ລະກໍລະນີບົນພື້ນຖານຫຼັກການທົດແທນ, ຫຼັງຈາກສຳເລັດການກໍ່ສ້າງໂຄງການຈະປັບແປງທີ່ດິນ ຫຼື ຊັບສິນໃຫ້ທຽບເທົ່າກັບ ສະພາບເດີມກ່ອນເລີ່ມໂຄງການ ແລະ ສົ່ງຄືນໃຫ້ເຈົ້າຂອງເພື່ອສືບຕໍ່ນຳໃຊ້.

**2. ຫຼັກການ ແລະ ເງື່ອນໄຂໃນການທົດແທນຄ່າເສຍຫາຍດິນທີ່ໄດ້ຮັບຜົນກະທົບຈາກໂຄງການ.**

- **ຫຼັກການທີ 1:** ຕອນດິນທີ່ມີເອກະສານໃບແຈ້ງເຊິ່ງເຄົ້າມູນເດີມບໍ່ແມ່ນດິນລັດ ແລະ ໄດ້ເສຍພາສີທີ່ດິນຢ່າງຕໍ່ເນື່ອງຈົນເຖິງປະຈຸບັນ, ເຊິ່ງໄດ້ມີການພັດທະນາແລ້ວທາງໂຄງການຈະທົດແທນຕາມຫົວໜ່ວຍລາຄາທີ່ໄດ້ກຳນົດໄວ້ໃນ ຂໍ້ຕົກລົງ ສະບັບນີ້.
- **ຫຼັກການທີ 2:** ຕອນດິນທີ່ມີເອກະສານໃບແຈ້ງເສຍພາສີ ເຊິ່ງເປັນດິນຈັບຈອງ ແລະ ເສຍພາສີທີ່ດິນຕໍ່ເນື່ອງຈົນເຖິງປະຈຸບັນ, ແຕ່ບໍ່ມີການພັດທະນາ ແມ່ນຈະທົດແທນເປັນເງິນຕາມມູນຄ່າເສຍພາສີ ແລະ ຄ່າທຳນຽມທີ່ໄດ້ຈ່າຍໃຫ້ລັດໃນໄລຍະຜ່ານມາທັງໝົດເປັນມູນຄ່າທົດແທນ.
- **ຫຼັກການທີ 3:** ຕອນດິນທີ່ບໍ່ມີເອກະສານໃບແຈ້ງ, ບໍ່ໄດ້ເສຍພາສີ ແລະ ຄ່າທຳນຽມໃດໆ ແຕ່ມີການພັດທະນາແລ້ວຖ້າເຄົ້າມູນເດີມແມ່ນດິນລັດ ແມ່ນໃຫ້ທົດແທນຄ່າສິ່ງປຸກສ້າງ ຫຼື ມູນຄ່າທີ່ພັດທະນາເສຍຫາຍຕາມການຄິດໄລ່ຂອງຄະນະກຳມະການເປັນມູນຄ່າທົດແທນ, ສ່ວນທີ່ດິນແມ່ນບໍ່ໄດ້ຮັບການທົດແທນແຕ່ຢ່າງໃດ, ຖ້າກໍລະນີເຄົ້າມູນເດີມບໍ່ແມ່ນດິນລັດສ່ວນທີ່ດິນແມ່ນໄດ້ຮັບການທົດແທນ.
- **ຫຼັກການທີ 4:** ຕອນດິນທີ່ບໍ່ມີ ຫຼື ມີເອກະສານໃບແຈ້ງແຕ່ບໍ່ເສຍພາສີທີ່ດິນ, ບໍ່ເສຍຄ່າທຳນຽມ, ບໍ່ໄດ້ພັດທະນາ ຫຼື ຕອນດິນບໍ່ມີໃບແຈ້ງ, ບໍ່ໄດ້ເສຍພາສີຕໍ່ເນື່ອງ 3 ປີ ຈະຖືວ່າເປັນຕອນດິນບໍ່ໄດ້ຮັບການອານຸຍາດ ແລະ ຖືວ່າ ເປັນດິນຈັບຈອງໃນກໍລະນີນີ້ແມ່ນຈະບໍ່ໄດ້ຮັບການທົດແທນໃດໆທັງໝົດ.
- **ຫຼັກການທີ 5:** ສຳລັບການທົດແທນດິນນາແມ່ນລວມເອົາຄ່າທົດແທນຂອງຄັນນາແລ້ວ, ແຕ່ຖ້າກໍລະນີຄັນນາຖືກຜົນກະທົບຕ່າງຫາກແມ່ນທົດແທນຕ່າງຫາກ.

**3. ວິທີການຄິດໄລ່ແຕ່ລະປະເພດ ແລະ ກຳນົດລາຄາທົດແທນປະຕິບັດດັ່ງລຸ່ມນີ້:**

| ລ/ດ | ປະເພດດິນ | ວິທີການຄິດໄລ່ ແລະ ກຳນົດລາຄາທົດແທນ |
|---|---|---|
| 1 | ດິນປຸກສ້າງຢູ່ບ້ານເດີມ:<br>- ດິນປຸກສ້າງແຄມທາງໃຫຍ່<br>- ດິນປຸກສ້າງແຄມທາງຊອຍ | <br>15,000 ກີບ/$ມ^2$<br>6,000 ກີບ/$ມ^2$ |
| 2 | ດິນນາເໝືອງ | 72,000,000 ກີບ/ເຮັກຕາ |
| 3 | ດິນນາເຂື່ອ ແລະ ດິນຈັບຈອງ | 3,000 ກີບ/$ມ^2$ |
| 4 | ດິນໜອງປາຂຸດ | 10,000 ກີບ/$ມ^3$ |
| 5 | ດິນໜອງປາຕົ້ນຫ້ວຍ | 5,000 ກີບ/$ມ^3$ |
| 6 | ດິນສວນ | 3,000 ກີບ/$ມ^2$ |
| 7 | ດິນສວນເຂື່ອ | 2,000 ກີບ/$ມ^2$ |
| 8 | ດິນເຖື່ອນສັດ | 2,000 ກີບ/$ມ^2$ |

**ໝາຍເຫດ:**

- ສຳລັບດິນທີ່ຢູ່ກ້ອງແລວສາຍສົ່ງແມ່ນຈະບໍ່ໄດ້ຮັບທົດແທນ ເພາະຍັງສາມາດນຳໃຊ້ເຂົ້າໃນການຜະລິດປູກພືດທີ່ມີຄວາມສູງບໍ່ເກີນ 3 ແມັດ;

**ມາດຕາ 3: ວ່າດ້ວຍການສ້າງຄວາມເຂັ້ມແຂງແກ່ອຳນາດການປົກຄອງບ້ານ.**

- ຈັດຝຶກອົບຮົມດ້ານການນຳພາ ແລະ ຄຸ້ມຄອງບ້ານໃຫ້ແກ່ຄະນະບ້ານ.
- ສະໜັບສະໜູນບັນດາອົງການຈັດຕັ້ງລະດັບບ້ານ ເຊັ່ນ: ສະຫະພັນແມ່ຍິງ, ແນວໂຮມບ້ານ, ຊາວໜຸ່ມ, ໜ່ວຍປ້ອງກັນຄວາມສະຫງົບ ແລະ ອື່ນໆ ເພື່ອເປັນເສນາທິການທີ່ມີປະສິດທິພາບໃຫ້ແກ່ຄະນະບ້ານຕາມຄວາມເໝາະສົມ.

## ມາດຕາ 4: ການກຳນົດຕົວເລກໃນການຄິດໄລ່ລາຄາຫົວໜ່ວຍທົດແທນ.

### 1. <u>ວິທີການຄິດໄລ່ໄມ້ໃຫ້ລຳ/ໄມ້ປ້ອງ</u>.

| ລ/ດ | ປະເພດໄມ້ໃຫ້ລຳ | ຫົວໜ່ວຍ | ລາຄາ ( ກີບ ) | ໝາຍເຫດ |
|---|---|---|---|---|
| 1 | ໄມ້ຊາງໄຜ | ສຸມ | 20,000 | 15 ລຳລົງມາແມ່ນຄິດໄລ່ເປັນສຸມນ້ອຍ, 15 ລຳຂຶ້ນໄປແມ່ນຄິດໄລ່ເປັນສຸມໃຫຍ່ |
| | | | 35,000 | |
| 2 | ໄມ້ໄຜ່ບ້ານ | ສຸມ | 20,000 | |
| | | | 35,000 | |
| 3 | ໄມ້ໄຜ່ຫວານ | ສຸມ | 20,000 | |
| | | | 35,000 | |
| 4 | ໜໍ່ລອຍ | ສຸມ | 20,000 ກີບ/ສຸມ | ສຸມນ້ອຍ |
| | | | 35,000 ກີບ/ສຸມ | ສຸມໃຫຍ່ |
| 5 | ຕົ້ນກ້ວຍ | ສຸມ | 20,000 ກີບ/ສຸມ | ສຸມນ້ອຍ 4 ຕົ້ນລົງມາ |
| | | | 35,000 ກີບ/ສຸມ | ສຸມໃຫຍ່ 5 ຕົ້ນຂຶ້ນໄປ |
| 6 | ອ້ອຍ | ສຸມ | 20,000 ກີບ/ສຸມ | ສຸມນ້ອຍ 15 ລຳລົງມາ |
| | | | 35,000 ກີບ/ສຸມ | ສຸມໃຫຍ່ 15 ລຳຂຶ້ນໄປ |
| 7 | ໝາກນັດ | ຕົ້ນ | 3,000 ກີບ | |

**<u>ໝາຍເຫດ</u>:** ສຳລັບໄມ້ປ້ອງ ແລະ ໄມ້ອຸດສາຫະກຳຫລັງຈາກໄດ້ຮັບການທົດແທນແລ້ວແມ່ນມອບໃຫ້ເຈົ້າຂອງຊັບສິນເອົາໄປນຳໃຊ້ ແລະ ປ່າໄມ້ປ້ອງທຳມະຊາດທີ່ບໍ່ແມ່ນສວນປູກແມ່ນຈະບໍ່ໄດ້ຮັບການທົດແທນ.

### 2. <u>ໄມ້ອຸດສາຫະກຳ</u>.

<u>ສູດຄິດໄລ່</u>: ມູນຄ່າທົດແທນ = **ຄ່າບຸກເບີກພື້ນທີ່ + ລາຄາເບ້ຍ + ( ຄ່າຮັກສາ x ຈຳນວນປີ ).**

| ລ/ດ | ປະເພດຕົ້ນໄມ້ | ຄ່າບຸກເບີກພື້ນທີ່ | ລາຄາເບ້ຍ | ຄ່າຮັກສາ | ລາຄາທົດແທນຕາມອາຍຸ ( ກີບ/ປີ ) | | | | |
|---|---|---|---|---|---|---|---|---|---|
| | | | | | 1 | 2 | 3 | 4 | 5 |
| 1 | ໄມ້ອຸດສາຫະກຳທຸກຊະນິດ | 3,500 | 15,000 | 3,500 | 22,000 | 25,500 | 29,000 | 32,500 | 36,000 |

### 3. <u>ຊັບສິນທີ່ບໍ່ໄດ້ຮັບການທົດແທນ</u>.

- ມັນຕົ້ນ, ມັນດ້າງ, ເຂົ້າຟາງ, ເຜືອກ, ຂີງ, ຫົວສີໄຄ, ໝາກອຶ, ໝາກໂຕ່ນ, ໝາກນໍ້າ, ໝາກໂມ, ໝາກບວບ ໝາກຖົ່ວຕ່າງໆ, ໝາກເຂືອ, ໝາກເຫລັ່ນ, ສາລີ, ໝາກເຜັດ, ຜັກຕ່າງໆ ແລະ ພືດລົ້ມລຸກອື່ນໆ ທາງໂຄງການຈະແຈ້ງໃຫ້ແກ່ປະຊາຊົນຜູ້ຖືກຜົນກະທົບກ່ອນຢ່າງໜ້ອຍ 6 ເດືອນ ເພື່ອມີເວລາເກັບກູ້ ຫຼື ຍ້າຍໄປບ່ອນອື່ນ.
- ເນື້ອທີ່ໄຮ່, ຖຽງໄຮ່ ແລະ ເຄື່ອງປູກຂອງຝັງໃນເນື້ອທີ່ໄຮ່.

**<u>ໝາຍເຫດ</u>:**

- ຕໍ່ຊັບສິນ, ຕົ້ນໄມ້ອື່ນໆ ຍັງບໍ່ທັນໄດ້ກຳນົດໃນລາຄາຫົວໜ່ວຍທົດແທນຂ້າງເທິງແມ່ນໃຫ້ປັບໃຊ້ມູນຄ່າຂອງຊັບສິນ ຫຼື ຕົ້ນໄມ້ທີ່ໃກ້ຄຽງກັນ, ພ້ອມດຽວກັນນີ້ກໍ່ແມ່ນມອບໃຫ້ຄະນະກຳມະການໄກ່ເກ່ຍພິຈາລະນາຕາມຄວາມເປັນຈິງ ແລະ ເໝາະສົມ.
- ສຳລັບຕົ້ນໄມ້ທຳມະຊາດ ທີ່ເກີດເອງໂດຍທຳມະຊາດ ແລະ ບັນດາພືດຕົ້ນຕໍ່າ ( ຕົ້ນໄມ້ບໍ່ໄດ້ປູກດ້ວຍຕົນເອງ ເຊັ່ນ: ປ່າເລົ່າ ແລະ ໄຮ່ເລົ່າ ) ແມ່ນຈະບໍ່ໄດ້ມີການທົດແທນ.
- ການຈ່າຍຄ່າປົວແປງຮີດຄອງປະເພນີ ໂດຍສະເພາະປ່າຊ້າ ນັ້ນຖືວ່າຫຼັງຈາກບ້ານທີ່ຖືກຜົນກະທົບໄດ້ຮັບເງິນຄ່າທົດແທນແລ້ວພັນທະຕ່າງໆ ທີ່ມີລະຫ່ວາງບ້ານ ແລະ ໂຄງການຖືວ່າສິ້ນສຸດກັນ.

**ມາດຕາ 5 : ວ່າດ້ວຍການຈັດຕັ້ງປະຕິບັດ.**

ມອບໃຫ້ຄະນະກຳມະການສິ່ງແວດລ້ອມ, ຊົດເຊີຍ ແລະ ຊີວິດການເປັນຢູ່ຂອງປະຊາຊົນທີ່ໄດ້ຮັບຜົນກະທົບຈາກໂຄງການເຂື່ອນໄຟຟ້ານໍ້າຕົກຂັ້ນແຂວງ ແລະ ກອງເລຂາ ແລະ ລັດວິສາຫະກິດໄຟຟ້າລາວ, ຜູ້ປະສານງານໂຄງການກໍ່ສ້າງໂຄງການແລວສາຍສົ່ງໄຟຟ້າແຮງສູງ 500 ກວ ແຂວງຊຽງຂວາງ ຫາ ສະຖານີນາຊາຍທອງ, ນະຄອນຫຼວງວຽງຈັນ, ບັນດາເມືອງ, ຫ້ອງການ ແລະ ການຈັດຕັ້ງທີ່ກ່ຽວຂ້ອງທຸກພາກສ່ວນ ລວມທັງພໍ່ແມ່ປະຊາຊົນຈົ່ງຮັບຮູ້ ແລະ ອຳນວຍຄວາມສະດວກ ເພື່ອເຮັດໃຫ້ວຽກງານການທົດແທນຄ່າເສຍຫາຍ ແລະ ການໄກ່ເກ່ຍແກ້ໄຂບັນຫາຜົນກະທົບຢູ່ບໍລິເວນພື້ນທີ່ກໍ່ສ້າງໂຄງການໃຫ້ຈັດຕັ້ງປະຕິບັດສຳເລັດຜົນຕາມຄາດໝາຍ.

**ມາດຕາ 6 :** ຂໍ້ຕົກລົງ ສະບັບໃດຂັດກັບສະບັບນີ້ແມ່ນໃຫ້ຍົກເລີກທັງໝົດ.
**ມາດຕາ 7 :** ຂໍ້ຕົກລົງ ສະບັບນີ້ມີຜົນສັກສິດ ແລະ ນຳໃຊ້ໄດ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ທຸກແທນ **ເຈົ້າແຂວງ ແຂວງຊຽງຂວາງ**

ດຣ. ຄຳປາວ
Dr. Khampao

ບ່ອນສຳເນົາສົ່ງ :

1. ຄະນະກຳມະການຂັ້ນແຂວງ 01 ສະບັບ.
2. ຄະນະກຳມະການຂັ້ນເມືອງ 03 ສະບັບ.
3. ລັດວິສາຫະກິດໄຟຟ້າລາວ 01 ສະບັບ.
4. ຜູ້ປະສານງານໂຄງການ 01 ສະບັບ.
5. ສຳເນົາ 01 ສະບັບ.